ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ                                                   ເລກທີ 192 /ກຕສ

ນະຄອນຫຼວງວຽງຈັນ, ວັນທີ ໐໒ ກຸມພາ ໒໐໒໒

# ຂໍ້ຕົກລົງ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ອົງການດັດສົມໂທລະຄົມມະນາຄົມ

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງເຕັກໂນໂລຊີ ແລະ ການສື່ສານ ສະບັບເລກທີ 625/ນຍ, ລົງວັນທີ 22 ຕຸລາ 2021;
- ອີງຕາມ ການຄົ້ນຄວ້າສະເໜີຂອງ ກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 064/ກຈງ, ລົງວັນທີ ໒໕ ມັງກອນ 2022.

## ລັດຖະມົນຕີ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ອອກຂໍ້ຕົກລົງ:

## ໝວດທີ 1

## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງອົງການດັດສົມໂທລະຄົມມະນາຄົມ ແນໃສ່ຈັດຕັ້ງປະຕິບັດວຽກງານຂອງ ອົງການດັດສົມໂທລະຄົມມະນາຄົມ ໃຫ້ມີປະສິດທະຜົນສູງ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ອົງການດັດສົມໂທລະຄົມມະນາຄົມ ຕົວອັກສອນຫຍໍ້ "ອດທ" ເປັນພາສາສາກົນ "Lao Telecommunications Regulatory Authority" ຂຽນຫຍໍ້ "LTRA" ແມ່ນໂຄງປະກອບກົງຈັກ ຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ, ມີພາລະບົດບາດເປັນເສນາທິການໃຫ້ແກ່ກະຊວງເຕັກໂນໂລຊີ ແລະ ການສື່ສານ ກ່ຽວກັບການຄຸ້ມຄອງ ແລະ ພັດທະນາວຽກງານ ດັດສົມໂທລະຄົມມະນາຄົມ, ວຽກງານທະບຽນໂທລະຄົມມະນາຄົມ ແລະ ອິນເຕີເນັດ, ວຽກງານເລກໝາຍໂທລະຄົມມະນາຄົມ ແລະ ວຽກງານປົກປ້ອງຜູ້ໃຊ້ບໍລິການ ແລະ ແກ້ໄຂຂໍ້ຂັດແຍ່ງ ໃນຂອບເຂດທົ່ວປະເທດ.



9.

## ໝວດທີ 2

## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ອົງການດັດສົມໂທລະຄົມມະນາຄົມ ມີໜ້າທີ່ ດັ່ງນີ້:

1. ປະຕິບັດກົດໝາຍ, ດຳລັດ, ນິຕິກຳອື່ນຂອງຂັ້ນເທິງ ແລະ ນິຕິກຳຕ່າງໆ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ;
2. ຄົ້ນຄວ້າ, ເຊື່ອມຊຶມແນວທາງ ນະໂຍບາຍຂອງພັກ ແລະ ລັດຖະບານ ກ່ຽວກັບການຄຸ້ມຄອງ ແລະ ພັດທະນາວຽກງານ ດັດສົມໂທລະຄົມມະນາຄົມ, ວຽກງານທະບຽນໂທລະຄົມມະນາຄົມ ແລະ ອິນເຕີເນັດ, ວຽກງານເລກໝາຍໂທລະຄົມມະນາຄົມ ແລະ ວຽກງານປົກປ້ອງຜູ້ໃຊ້ບໍລິການ ແລະ ແກ້ໄຂຂໍ້ຂັດແຍ່ງ;
3. ສ້າງຮ່າງແຜນຍຸດທະສາດ ແລະ ນະໂຍບາຍກ່ຽວກັບ ການຄຸ້ມຄອງ ແລະ ພັດທະນາວຽກງານ ດັດສົມໂທລະຄົມມະນາຄົມ, ວຽກງານທະບຽນໂທລະຄົມມະນາຄົມ ແລະ ອິນເຕີເນັດ, ວຽກງານເລກໝາຍໂທລະຄົມມະນາຄົມ ແລະ ວຽກງານປົກປ້ອງຜູ້ໃຊ້ບໍລິການ ແລະ ແກ້ໄຂຂໍ້ຂັດແຍ່ງ; ສ້າງແຜນງານ, ແຜນການ ແລະ ໂຄງການ ກ່ຽວກັບວຽກງານຕ່າງໆ ເພື່ອສະເໜີລັດຖະມົນຕີກະຊວງ ເຕັກໂນໂລຊີ ແລະ ການສື່ສານ ພິຈາລະນາຮັບຮອງ ແລະ ອະນຸມັດ ພ້ອມທັງຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;
4. ລາຍງານຄະນະນຳກະຊວງ, ເຂົ້າຮ່ວມກອງປະຊຸມ, ປະສານສົມທົບກັບຫ້ອງການ, ກົມ, ສະຖາບັນ, ສູນ ແລະ ພາກສ່ວນອື່ນ ແຕ່ສູນກາງຮອດທ້ອງຖິ່ນ ຕໍ່ກັບວຽກທີ່ຕົນຮັບຜິດຊອບ;
5. ຄົ້ນຄວ້າ ສ້າງ, ປັບປຸງ ກົດໝາຍ, ນິຕິກຳ ແລະ ແຜນພັດທະນາ ກ່ຽວກັບວຽກງານດັດສົມໂທລະຄົມມະນາຄົມ ໃຫ້ແທດເໝາະກັບສະພາບການພັດທະນາເສດຖະກິດ-ສັງຄົມ ແຕ່ລະໄລຍະ;
6. ສ້າງແຜນການເຄື່ອນໄຫວວຽກ, ເຄື່ອນໄຫວວຽກວິຊາສະເພາະ, ສ້າງແຜນໂຄງການລົງທຶນຂອງລັດ, ຂຶ້ນແຜນລາຍຮັບວິຊາການ, ຂຶ້ນແຜນລາຍຈ່າຍງົບປະມານ. ຄຸ້ມຄອງ ແລະ ນຳໃຊ້ງົບປະມານ ແລະ ຊັບສິນ ຕາມການອະນຸມັດຂອງກະຊວງ;
7. ຄົ້ນຄວ້າປັບປຸງກົງຈັກການຈັດຕັ້ງ ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ ໃນແຕ່ລະໄລຍະ, ຂຶ້ນແຜນຄວາມຕ້ອງການ ບຳລຸງ, ກໍ່ສ້າງ, ຊັບຊ້ອນ, ຄຸ້ມຄອງ, ປະຕິບັດ ນະໂຍບາຍ ແລະ ວິໄນ ຕໍ່ພະນັກງານພາຍໃນ ຂອງອົງການດັດສົມໂທລະຄົມມະນາຄົມ;
8. ຈັດກອງປະຊຸມ ໂຄສະນາ, ເຜີຍແຜ່, ສຳມະນາ ແລະ ຝຶກອົບຮົມ ກ່ຽວກັບ ນິຕິກຳຂັ້ນຕ່າງໆ, ຜົນສຳເລັດທາງດ້ານວິຊາການ, ເຕັກໂນໂລຊີ ແລະ ຫົວຄິດປະດິດສ້າງ ດ້ານໂທລະຄົມມະ ນາຄົມ ແລະ ອິນເຕີເນັດ;
9. ຄົ້ນຄວ້າ, ອອກອະນຸຍາດ, ໂຈະ ແລະ ຍົກເລີກ ໃບອະນຸຍາດ ການດຳເນີນທຸລະກິດ ໂທລະຄົມມະ ນາຄົມ, ອິນເຕີເນັດ, ການນຳໃຊ້ເລກໝາຍໂທລະຄົມມະນາຄົມ, ການຕິດຕັ້ງອຸປະກອນໂທລະຄົມມະນາຄົມ, ການເຊື່ອມຕໍ່ເຄືອຂ່າຍທັງພາຍໃນ ແລະ ຕ່າງປະເທດ, ນຳໃຊ້ພື້ນຖານໂຄງລ່າງ, ການນຳເຂົ້າ-ສົ່ງອອກ ພ້ອມທັງຄຸ້ມຄອງ, ຕິດຕາມ ແລະ ກວດກາ ແຜນການນຳເຂົ້າ-ສົ່ງອອກ ອຸປະກອນໂທລະຄົມມະນາຄົມ ແລະ ອິນເຕີເນັດ;
10. ຄົ້ນຄວ້າ ການອອກໃບສັ່ງມອບ ແລະ ໃບຄິດໄລ່ ຄ່າທຳນຽມ, ຄ່າບໍລິການ ດ້ານໂທລະຄົມ ມະນາຄົມ ແລະ ອິນເຕີເນັດ, ຄ່າເລກໝາຍໂທລະຄົມມະນາຄົມ ແລະ ຄ່າປັບໃໝຕໍ່ກັບບຸກ ຄົນ ແລະ ນິຕິບຸກຄົນ ທີ່ກ່ຽວພັນກັບວຽກງານດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ;



໑.

11. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການເຄື່ອນໄຫວດ້ານວິຊາການ ຂອງບັນດາຫົວໜ່ວຍທຸລະກິດ ໂທລະຄົມມະນາຄົມ ແລະ ອິນເຕີເນັດ ເພື່ອໃຫ້ຮັບປະກັນການປະຕິບັດ ກົດໝາຍ ແລະ ລະບຽບການ;

12. ຄຸ້ມຄອງ, ຕິດຕາມ, ກວດກາ ການສົ່ງເສີມການຂາຍ, ກົດສົມອັດຕາບໍລິການ, ມູນຄ່າການນຳໃຊ້ ທາງດ້ານ ໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃຫ້ເປັນທຳ, ຖືກຕ້ອງ ແລະ ສອດຄ່ອງກັບ ແຜນຍຸດທະສາດ, ແຜນພັດທະນາ ຕາມກົນໄກເສດຖະກິດຕະຫຼາດ ໃຫ້ສອດຄ່ອງກັບ ກົດໝາຍ ແລະ ລະບຽບການ;

13. ຕິດຕາມ, ກວດກາ ແລະ ອອກໃບຢັ້ງຢືນ ຄຸນນະພາບການບໍລິການເຄືອຂ່າຍ ໂທລະຄົມມະ ນາຄົມ ແລະ ອິນເຕີເນັດ;

14. ຄຸ້ມຄອງ, ສ້າງກົນໄກ, ນະໂຍບາຍ ແລະ ຊຸກຍູ້ ໃຫ້ມີການຂະຫຍາຍ ແລະ ການນຳໃຊ້ໂຄງລ່າງພື້ນຖານ ໂທລະຄົມມະນາຄົມ ແລະ ອິນເຕີເນັດ ຮ່ວມກັນ ໂດຍຮັບປະກັນຄຸນນະພາບ ແລະ ຄວາມປອດໄພ;

15. ຄົ້ນຄວ້າ ສ້າງ, ປັບປຸງ, ຄຸ້ມຄອງ, ຈັດສັນ, ຕິດຕາມ ແລະ ກວດກາ ການນຳໃຊ້ເລກໝາຍໂທລະຄົມມະນາຄົມ ເພື່ອຮັບປະກັນ ການນຳໃຊ້ທີ່ມີປະສິດທິພາບ ແລະ ປະສິດທິຜົນ ແນ່ໃສ່ສ້າງຜົນປະໂຫຍດສູງສຸດໃຫ້ແກ່ພາກລັດແລະສັງຄົມ;

16. ຮັບຄຳສະເໜີ ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນການດຳເນີນທຸລະກິດ ຫຼືແລະ ການນຳໃຊ້ບໍລິການດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ;

17. ຄົ້ນຄວ້າ ກຳນົດຮູບແບບ, ວິທີການ ແລະ ເຄື່ອງມືທີ່ທັນສະໄໝ ເພື່ອມາຮັບໃຊ້ວຽກງານດັດສົມໂທລະຄົມມະນາຄົມ ໃຫ້ມີຄວາມສະດວກ, ວ່ອງໄວ ໃນການປະຕິບັດໜ້າທີ່ ແລະ ຮັບປະກັນຄວາມປອດໄພຂອງຂໍ້ມູນ;

18. ເກັບກຳສະຖິຕິການພັດທະນາ ແລະ ການຂະຫຍາຍຕົວ ຂອງວຽກງານດັດສົມໂທລະຄົມມະ ນາຄົມ ແລະ ອິນເຕີເນັດ;

19. ເປັນກອງເລຂາ ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕ່ອນ;

20. ພົວພັນ ແລະ ຮ່ວມມືກັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນແລະຕ່າງປະເທດ ກ່ຽວກັບວຽກງານດັດສົມໂທລະຄົມມະນາຄົມ ຕາມການອະນຸມັດ ຂອງຄະນະນຳກະຊວງ;

21. ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນນິຕິກຳອື່ນ ແລະ ການມອບໝາຍ ຂອງລັດຖະມົນຕີ, ຮອງລັດຖະມົນຕີ ຜູ້ຊີ້ນຳ.

**ມາດຕາ 4 ຂອບເຂດສິດ**

ອົງການດັດສົມໂທລະຄົມມະນາຄົມ ມີສິດ ດັ່ງນີ້:

1. ລາຍງານຄະນະນຳກະຊວງ, ເຂົ້າຮ່ວມກອງປະຊຸມ, ປະສານສົມທົບກັບຫ້ອງການ, ກົມ, ສະຖາບັນ, ສູນ ແລະ ພາກສ່ວນອື່ນ ແຕ່ສູນກາງຮອດທ້ອງຖິ່ນ ຕໍ່ກັບວຽກທີ່ຕົນຮັບຜິດຊອບ;
2. ສ້າງ, ປັບປຸງ ແລະ ເຜີຍແຜ່ ນິຕິກຳກ່ຽວກັບວຽກງານດັດສົມໂທລະຄົມມະນາຄົມ ແລະ ອິນເຕີເນັດ ພ້ອມທັງຕິດຕາມການຈັດຕັ້ງປະຕິບັດບັນດານິຕິກຳຕ່າງໆ ດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ;
3. ເຄື່ອນໄຫວວຽກວິຊາການຕາມແຜນການ, ດຳເນີນ ແລະ ຄຸ້ມຄອງ ໂຄງການລົງທຶນຂອງລັດ, ຕິດຕາມການເກັບລາຍຮັບວິຊາການ, ນຳໃຊ້, ຄຸ້ມຄອງ ງົບປະມານ ແລະ ສັບຊິນ ຕາມການອະນຸມັດຂອງກະຊວງ;
4. ສະເໜີປັບປຸງ ກົງຈັກການຈັດຕັ້ງ ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ ໃນແຕ່ລະໄລຍະ, ຂຶ້ນແຜນຄວາມຕ້ອງການ ປ່າລູງ, ກໍ່ສ້າງ, ຊັບຊ້ອນ, ຄຸ້ມຄອງ, ປະຕິບັດນະໂຍບາຍ ແລະ ວິໄນ ຕໍ່ພະນັກງານ-ລັດຖະກອນພາຍໃນ ອົງການດັດສົມໂທລະຄົມມະນາຄົມ;

5. ຈັດກອງປະຊຸມ ໂຄສະນາ, ເຜີຍແຜ່, ສຳມະນາ ແລະ ຝຶກອົບຮົມ ກ່ຽວກັບ ນິຕິກຳຂັ້ນຕ່າງໆ, ຜົນສຳເລັດທາງດ້ານວິຊາການ, ເຕັກໂນໂລຊີ ແລະ ຫົວຄິດປະດິດສ້າງ ດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ;

6. ອອກໃບອະນຸຍາດ, ສືບຕໍ່, ໂຈະ ແລະ ຍົກເລີກ ໃບອະນຸຍາດ ການດຳເນີນທຸລະກິດດ້ານໂທລະຄົມມະນາຄົມ, ອິນເຕີເນັດ, ນຳໃຊ້ເລກໝາຍໂທລະຄົມມະນາຄົມ, ການຕິດຕັ້ງອຸປະກອນໂທລະຄົມມະນາຄົມ, ການເຊື່ອມຕໍ່ເຄືອຂ່າຍທັງພາຍໃນ ແລະ ຕ່າງປະເທດ, ການນຳໃຊ້ພື້ນຖານໂຄງລ່າງ, ການນຳເຂົ້າ-ສົ່ງອອກ, ແຜນນຳເຂົ້າ-ສົ່ງອອກ ອຸປະກອນ ໂທລະຄົມມະນາຄົມ ແລະ ອິນເຕີເນັດ;

7. ອອກແຈ້ງການ, ຄຳແນະນຳ ກ່ຽວກັບການປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານດັດສົມໂທລະຄົມມະນາຄົມ ແລະ ອິນເຕີເນັດ ເຖິງຫົວໜ່ວຍທຸລະກິດທີ່ຂຶ້ນກັບຂັ້ນຄຸ້ມຄອງ ຂອງຕົນ;

8. ກຳນົດຄຸນລັກສະນະເຕັກນິກ ແລະ ຢັ້ງຢືນ ອຸປະກອນກວດກາຄຸນນະພາບການບໍລິການ ດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ;

9. ອອກໃບຢັ້ງຢືນ ການຕິດຕັ້ງໂຄງລ່າງພື້ນຖານໂທລະຄົມມະນາຄົມ ແລະ ຄຸນນະພາບການບໍລິ ການໂທລະຄົມມະນາຄົມ ແລະ ອິນເຕີເນັດ;

10. ສ້າງກົນໄກ, ສ້າງນະໂຍບາຍ, ຊຸກຍູ້ ແລະ ຕິດຕາມ ການນຳໃຊ້ໂຄງລ່າງພື້ນຖານຮ່ວມກັນ ໃຫ້ມີຄວາມຮັບປະກັນທາງດ້ານ ຄຸນນະພາບ ແລະ ຄວາມປອດໄພ;

11. ອອກໃບສັ່ງມອບ ແລະ ໃບຄິດໄລ່ ຄ່າທຳນຽມ, ຄ່າບໍລິການ ດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ, ຄ່າເລກໝາຍໂທລະຄົມມະນາຄົມ ແລະ ຄ່າປັບໄໝ ຕໍ່ກັບ ບຸກຄົນ ແລະ ນິຕິບຸກຄົນ ທີ່ກ່ຽວພັນກັບວຽກງານດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ;

12. ສ້າງ, ປັບປຸງ, ນຳໃຊ້, ຕິດຕາມ ແລະ ກວດກາ ແຜນການຈັດສັນເລກໝາຍໂທລະຄົມມະນາຄົມ;

13. ແກ້ໄຂ ຄຳຮ້ອງຟ້ອງ ແລະ ຄຳສະເໜີ ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕໍ່ກັບຂໍ້ຂັດແຍ່ງທີ່ເກີດຂຶ້ນຂອງ ຜູ້ໃຊ້ ແລະ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ;

14. ນຳໃຊ້ເຄື່ອງມືທີ່ທັນສະໄໝ ເຂົ້າໃນການປະຕິບັດໜ້າທີ່ ກ່ຽວກັບວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດ ເພື່ອໃຫ້ມີຄວາມສະດວກ, ວ່ອງໄວ ແລະ ຮັບປະກັນຄວາມປອດໄພຂອງຂໍ້ມູນ;

15. ເກັບກຳສະຖິຕິ ການພັດທະນາ ແລະ ຂະຫຍາຍຕົວ ວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດ ຈາກຫົວໜ່ວຍທຸລະກິດ ແລະ ພາກສ່ວນກ່ຽວຂ້ອງ;

16. ເຄື່ອນໄຫວວຽກງານວິຊາສະເພາະ, ຈັດກອງປະຊຸມສຳມະນາ, ປຶກສາຫາລືແລກປ່ຽນຄວາມຄິດເຫັນ ແລະ ຈັດຝຶກອົບຮົມຊຸກຍູ້ວຽກງານດັດສົມໂທລະຄົມມະນາຄົມ ຕາມການອະນຸ ມັດຂອງຄະນະນຳກະຊວງ;

17. ປະຕິບັດສິດ ຂອງກອງເລຂາ ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ທັນເປັນດີຈີຕ່ອນ;

18. ພົວພັນ, ເຂົ້າຮ່ວມກອງປະຊຸມ, ເຊັນບົດບັນທຶກ, ເຊັນສັນຍາ, ຍາດແຍ່ງການຊ່ວຍເຫຼືອ ແລະ ການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ຕາມການອະນຸມັດ ຂອງຄະນະນຳກະຊວງ;

19. ປະຕິບັດສິດອື່ນ ຕາມທີ່ກຳນົດໄວ້ໃນນິຕິກຳອື່ນ ແລະ ການມອບໝາຍຂອງລັດຖະມົນຕີ, ຮອງລັດຖະມົນຕີ ຜູ້ຊີ້ນຳ.

# ໝວດທີ 3

## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ອົງການດັດສົມໂທລະຄົມມະນາຄົມ ມີໂຄງປະກອບກົງຈັກ ດັ່ງລຸ່ມນີ້:

1. ພະແນກ ສັງລວມ;
2. ພະແນກ ທະບຽນ ໂທລະຄົມມະນາຄົມ ແລະ ອິນເຕີເນັດ;
3. ພະແນກ ດັດສົມ ໂທລະຄົມມະນາຄົມ ແລະ ອິນເຕີເນັດ;
4. ພະແນກ ຄຸ້ມຄອງ ໂທລະຄົມມະນາຄົມ ແລະ ອິນເຕີເນັດ;
5. ພະແນກ ເລກໝາຍໂທລະຄົມມະນາຄົມ;
6. ພະແນກ ປົກປ້ອງຜູ້ໃຊ້ບໍລິການ ແລະ ແກ້ໄຂຂໍ້ຂັດແຍ່ງ;
7. ພະແນກ ພັດທະນາໂຄງລ່າງພື້ນຖານ ໂທລະຄົມມະນາຄົມ ແລະ ອິນເຕີເນັດ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ອົງການດັດສົມໂທລະຄົມ ມີໂຄງປະກອບບຸກຄະລາກອນ ດັ່ງລຸ່ມນີ້:

1. ຫົວໜ້າອົງການດັດສົມໂທລະຄົມມະນາຄົມ ຈໍານວນ 01 ທ່ານ, ຮັບຜິດຊອບຕໍ່ລັດຖະມົນຕີ ແລະ ຮອງລັດຖະມົນຕີກະຊວງ ຜູ້ຊີ້ນໍາຂົງເຂດວຽກງານ ກ່ຽວກັບຜົນສໍາເລັດ, ຂໍ້ຂາດຕົກບົກຜ່ອງໃນການປະຕິບັດວຽກງານຂອງຕົນ.

   ໃນເວລາຫົວໜ້າອົງການ ຕິດຂັດ ຕ້ອງມອບສິດໃຫ້ຮອງຫົວໜ້າອົງການທ່ານໃດທ່ານໜຶ່ງເປັນຜູ້ຮັກສາການແທນ;
2. ຮອງຫົວໜ້າອົງການດັດສົມໂທລະຄົມມະນາຄົມ ຈໍານວນໜຶ່ງ ຊ່ວຍຫົວໜ້າອົງການໃນການຊີ້ນໍາຂົງເຂດວຽກງານໃດໜຶ່ງຕາມການແບ່ງງານ ແລະ ການມອບໝາຍ; ຮັບຜິດຊອບຕໍ່ຫົວໜ້າອົງການ ກ່ຽວກັບຜົນສໍາເລັດ ແລະ ຂໍ້ຂາດຕົກບົກຜ່ອງຂອງຂົງເຂດວຽກງານທີ່ຕົນຊີ້ນໍາ.

   ຮອງຫົວໜ້າອົງການຜູ້ຮັກສາການແທນຫົວໜ້າ ຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະຮັກສາການແທນນັ້ນ ໃຫ້ຫົວໜ້າອົງການພາຍຫຼັງກັບມາປະຈໍາການ;
3. ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ລັດຖະກອນວິຊາການຈໍານວນໜຶ່ງ ຕາມການກໍານົດຕໍາແໜ່ງງານ.

   ສໍາລັບການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 7 ມາດຕະຖານຂອງຄະນະອົງການ**

ອົງການດັດສົມໂທລະຄົມມະນາຄົມ ມີມາດຕະຖານຂອງຄະນະອົງການ ດັ່ງລຸ່ມນີ້:

1. ບໍ່ໃຫ້ດໍາລົງຕໍາແໜ່ງໃດໜຶ່ງ, ບໍ່ໃຫ້ຖືຫຸ້ນ, ບໍ່ໃຫ້ເປັນທີ່ປຶກສາ ຫຼື ເຄື່ອນໄຫວວຽກງານອື່ນໆ ກ່ຽວກັບທຸລະກິດດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ;
2. ນອກນີ້ແມ່ນປະຕິບັດຕາມມາດຕະຖານຂອງຫົວໜ້າກົມ, ຮອງຫົວໜ້າກົມ ທີ່ກໍານົດໄວ້ໃນ ດໍາລັດວ່າດ້ວຍຕໍາແໜ່ງບໍລິຫານຂອງລັດຖະກອນ ແຫ່ງ ສປປ ລາວ ສະບັບເລກທີ 461/ລບ, ລົງວັນທີ 9 ຕຸລາ 2012.

# ໝວດທີ 4
# ໜ້າທີ່ຂອງແຕ່ລະພະແນກ

**ມາດຕາ 8 ໜ້າທີ່ຂອງພະແນກ ສັງລວມ**

ພະແນກສັງລວມ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສັງລວມ ແລະ ສະຫຼຸບແຜນເຄື່ອນໄຫວວຽກງານ, ວຽກງານກວດກາພັກ-ກວດກາລັດ, ວຽກງານປ້ອງກັນພັກ-ພະນັກງານ ແລະ ວຽກສາມສ້າງ ຂອງອົງການເປັນປົກກະຕິ ປະຈຳອາທິດ, ເດືອນ, ງວດ ແລະ ປີ;
2. ເປັນເສນາທິການໃນການຄົ້ນຄ້ວາສ້າງ ແລະ ປັບປຸງນິຕິກຳ ທີ່ກ່ຽວຂ້ອງກັບວຽກງານດັດສົມໂທ ລະຄົມມະນາຄົມ ຕາມລະບຽບການ;
3. ຄຸ້ມຄອງລາຍຮັບ-ລາຍຈ່າຍງົບປະມານ, ສັງລວມ ຄ່າທຳນຽມ, ຄ່າບໍລິການ ແລະ ຄ່າປັບໄໝ ທີ່ກ່ຽວຂ້ອງກັບວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດ ແລະ ປະສານສົມທົບກັບບັນດາພະແນກການ ຕໍ່ກັບການສ້າງແຜນລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ ຂອງອົງການໃນແຕ່ໄລຍະ;
4. ຕິດຕາມ, ກວດກາ, ສະຫຼຸບ, ສັງລວມ, ລາຍງານ ລາຍຮັບ ຄ່າທຳນຽມ ແລະ ຄ່າບໍລິການ;
5. ຄົ້ນຄວ້າ ຂຶ້ນແຜນ, ຄຸ້ມຄອງ, ຕິດຕາມ, ກວດກາ ການນຳໃຊ້ ງົບປະມານ ແລະ ຊັບສິນ ຕາມທີ່ໄດ້ຮັບອະນຸມັດຈາກກະຊວງ;
6. ຄຸ້ມຄອງທຸກປະເພດເອກະສານ, ເກັບກຳສະຖິຕິ ແລະ ສັງລວມຂໍ້ມູນ ຂອງອົງການໂດຍນຳໃຊ້ລະບົບເຄື່ອງມືທີ່ທັນສະໄໝຂອງກະຊວງ, ພ້ອມທັງໂຄສະນາເຜີຍແຜ່ ຂໍ້ມູນຂ່າວສານການເຄື່ອນໄຫວວຽກງານຂອງອົງການ ລົງໃນລະບົບຖານຂໍ້ມູນ ແລະ ເວັບໄຊ;
7. ຄົ້ນຄວ້າ ແລະ ສະເໜີ ຈັດຕັ້ງປະຕິບັດ ນະໂຍບາຍ ແລະ ວິໄນ ຕໍ່ພະນັກງານ;
8. ຄຸ້ມຄອງ, ສ້າງແຜນບຳລຸງ, ກໍ່ສ້າງ, ສັບຊ້ອນ ແລະ ຍົກຍ້າຍບຸກຄະລາກອນພາຍໃນ;
9. ເປັນເສນາທິການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດວຽກງານພົວພັນຮ່ວມມືສາກົນ,
10. ພົວພັນໂດຍກົງ ທາງວິຊາການກ່ຽວກັບວຽກງານກວດກາພັກ-ກວດກາລັດ, ວຽກປ້ອງກັນພັກ-ພະນັກງານ ແລະ ວຽກສາມສ້າງ ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ;
11. ສະຫຼຸບ, ສັງລວມ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານພົວພັນຮ່ວມມືສາກົນ;
12. ດຳເນີນວຽກງານພິທີການ, ຂໍ້ມູນຂ່າວສານ ແລະ ປະສານງານກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ;
13. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຫົວໜ້າອົງການ ແລະ ຄະນະອົງການຜູ້ຊີ້ນຳ.

**ມາດຕາ 9 ໜ້າທີ່ຂອງ ພະແນກ ທະບຽນ ໂທລະຄົມມະນາຄົມ ແລະ ອິນເຕີເນັດ**

ພະແນກທະບຽນໂທລະຄົມມະນາຄົມ ແລະ ອິນເຕີເນັດ ມີໜ້າທີ່ ດັ່ງນີ້:

1 ຄົ້ນຄວ້າ, ສ້າງ, ປັບປຸງ ແລະ ເຜີຍແຜ່ ບັນດານິຕິກຳ ກ່ຽວກັບ ວຽກງານການອອກອະນຸຍາດດຳເນີນທຸລະກິດ ແລະ ນຳເຂົ້າ-ສົ່ງອອກ ອຸປະກອນໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃນຂອບເຂດທີ່ອົງການດັດສົມໂທລະຄົມມະນາຄົມ ຮັບຜິດຊອບໃນແຕ່ລະໄລຍະ;

2 ຄົ້ນຄວ້າ ອະນຸຍາດ, ຕິດຕາມ, ກວດກາ, ຕໍ່, ໂຈະ, ຍົກເລີກ ດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ, ການນຳເຂົ້າ-ສົ່ງອອກ ອຸປະກອນໂທລະຄົມມະນາຄົມ ແລະ ອິນເຕີເນັດ;

3 ສ້າງກົນໄກ, ກຳນົດຮູບແບບ ແລະ ວິທີການ ເພື່ອສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການອອກອະນຸຍາດ ໃຫ້ມີຄວາມສະດວກ, ວ່ອງໄວ ແລະ ທັນສະໄໝ;

4 ຄຸ້ມຄອງ, ຕິດຕາມ, ກວດກາ, ອະນຸຍາດ, ໂຈະ, ຍົກເລີກ ການຕິດຕັ້ງຈຸດເຊື່ອມຕໍ່ເຄືອຂ່າຍ ອອກຕ່າງປະເທດ;

5 ຄົ້ນຄວ້າ ອອກໃບສັ່ງມອບ, ອອກໃບຄິດໄລ່ ຄ່າທຳນຽມ ແລະ ຄ່າບໍລິການ ດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ;

6 ປະສານສົມທົບກັບອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ແຕ່ສູນກາງຮອດທ້ອງຖິ່ນ ກ່ຽວກັບວຽກງານອະນຸຍາດດຳເນີນທຸລະກິ ແລະ ຈຸດເຊື່ອມຕໍ່ເຄືອຂ່າຍອອກຕ່າງປະເທດ ດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ;

7 ຄົ້ນຄວ້າ, ສະຫຼຸບ ແລະ ຂຶ້ນແຜນເຄື່ອນໄຫວວຽກງານ ຂອງພະແນກ, ປະຈຳ ອາທິດ, ເດືອນ, ງວດ ແລະ ປີ;

8 ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຫົວໜ້າອົງການ ແລະ ຄະນະອົງການຜູ້ຊີ້ນຳ.

**ມາດຕາ 10 ໜ້າທີ່ຂອງ ພະແນກ ດັດສົມໂທລະຄົມມະນາຄົມ ແລະ ອິນເຕີເນັດ**

ພະແນກດັດສົມໂທລະຄົມມະນາຄົມ ແລະ ອິນເຕີເນັດ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ, ປັບປຸງ ແລະ ເຜີຍແຜ່ ບັນດາບັນດານິຕິກຳ ກ່ຽວກັບວຽກງານການແຂ່ງຂັນ ດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ;
2. ສ້າງກົນໄກການຊຸກຍູ້ສົ່ງເສີມການແຂ່ງຂັນ ດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃຫ້ມີຄວາມແທດເໝາະກັບຄວາມຕ້ອງການຕົວຈິ່ງໃນແຕ່ລະໄລຍະ;
3. ຕິດຕາມ, ກວດກາ ແລະ ລາຍງານ ສະພາບການກຳນົດລາຄາຄ່າບໍລິການຂອງຜູ້ໃຫ້ບໍລິການ ເພື່ອຮັບປະກັນບໍ່ສົ່ງຜົນກະທົບດ້ານລົບຕໍ່ກົນໄກການຕະຫຼາດ ແລະ ເສດຖະກິດ-ສັງຄົມ;
4. ເກັບກຳ, ສຳຫຼວດ, ສຶກສາ, ວິເຄາະ ແລະ ຕີລາຄາ ສະພາບຂອງການແຂ່ງຂັນ ແລະ ການເໜັງຕີງຂອງຕະຫຼາດເປັນຈະຈຳ;
5. ຄົ້ນຄວ້າ ແລະ ກຳນົດ ຮູບແບບການ ໂຄງສ້າງລາຄາ, ອັດຕາຄ່າ ເພື່ອດັດສົມໃຫ້ຮັບປະກັນ ການແຂ່ງຂັນທີ່ເປັນທຳ, ຊຸກຍູ້ໃຫ້ມີບໍລິການໃໝ່ ຕາມການພັດທະນາຂອງເຕັກໂນໂລຊີ ແລະ ສອດ ຄ່ອງກັບກົນໄກຕະຫຼາດ;
6. ຕິດຕາມ, ກວດກາ, ແຈ້ງເຕືອນ ແລະ ສ້າງກົນໄກ ການຄຸ້ມຄອງອຳນາດການຄອບຄອງຕະຫຼາດ (Significant Market Power) ຂອງບໍລິສັດໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃນແຕ່ລະປີ;
7. ຈັດຕັ້ງປະຕິວຽກງານຮ່ວມມືສາກົນ ກ່ຽວກັບການແຂ່ງຂັນ ຕາມການມອບໝາຍຂອງຫົວໜ້າອົງການ ແລະ ຄະນະອົງການຜູ້ຊີ້ນຳ;
8. ສະຫຼຸບ ແລະ ຂຶ້ນແຜນເຄື່ອນໄຫວວຽກງານ ຂອງພະແນກ, ປະຈຳ ອາທິດ, ເດືອນ, ງວດ ແລະ ປີ;
9. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຫົວໜ້າອົງການ ແລະ ຄະນະອົງການຜູ້ຊີ້ນຳ.

**ມາດຕາ 11 ໜ້າທີ່ຂອງ ພະແນກ ຄຸ້ມຄອງ ໂທລະຄົມມະນາຄົມ ແລະ ອິນເຕີເນັດ**

ພະແນກຄຸ້ມຄອງໂທລະຄົມມະນາຄົມ ແລະ ອິນເຕີເນັດ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ, ປັບປຸງ ແລະ ເຜີຍແຜ່ ບັນດານິຕິກຳກ່ຽວກັບ ວຽກງານຄຸນນະພາບການບໍລິການ ແຕ່ລະໄລຍະ;
2. ຄົ້ນຄວ້າ ແລະ ກຳນົດ ຕົວຊີ້ວັດຄຸນນະພາບການໃຫ້ບໍລິການ ໃຫ້ແທດ ເໝາະກັບການພັດທະນາເຕັກໂນໂລຊີ ດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ;
3. ຄົ້ນຄວ້າ, ສ້າງລະບົບ ເພື່ອເຜີຍແຜ່ຂໍ້ມູນ ເຂດການບໍລິການເຄືອຂ່າຍໂທລະຄົມມະນາຄົມ ແລະ ອິນເຕີເນັດທີ່ໄດ້ຮັບການຢັ້ງຢືນ ແລະ ວິທີການກວດກາ ຄຸນນະພາບການບໍລິການແບບງ່າຍດາຍດ້ວຍຕົນເອງ;
4. ຊຸກຍູ້ ແລະ ສົ່ງເສີມ ໃຫ້ບັນດາບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ຂະ ຫຍາຍເຄືອຂ່າຍໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃຫ້ມີຄຸນນະພາບ ແລະ ທົ່ວເຖິງ ໃນຂອບເຂດທົ່ວປະເທດ;

5. ກວດກາ ແລະ ຢັ້ງຢືນ ຄຸນນະພາບເຄືອຂ່າຍການໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ກ່ອນແລະຫຼັງໃຫ້ບໍລິການ ໃນຂອບເຂດທົ່ວປະເທດ;
6. ກວດກາຄຸນນະພາບເຄືອຂ່າຍການໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ລຽບຕາມຊາຍແດນ ຮ່ວມກັບປະເທດອ້ອມຂ້າງ;
7. ກວດກາ ແລະ ອອກໃບຢັ້ງຢືນ ຄຸນນະພາບເຄືອຂ່າຍການໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ປະຈຳ 6 ເດືອນ ແລະ ປີ ໃນຂອບເຂດທົ່ວປະເທດ;
8. ວິເຄາະ ແລະ ລາຍງານ ຜົນການກວດກາຄຸນນະພາບເຄືອຂ່າຍການໃຫ້ບໍລິການໂທລະຄົມມະນາ ຄົມ ແລະ ອິນເຕີເນັດ ໃຫ້ສັງຄົມຮັບຮູ້ ຕາມການເຫັນດີຂອງຄະນະນຳ ພ້ອມທັງແຈ້ງໃຫ້ບັນດາບໍລິສັດປັບປຸງ ໃນເຂດທີ່ເຫັນວ່າຍັງບໍ່ທັນໄດ້ຄຸນນະພາບ;
9. ສຶກສາ, ສ້າງ, ພັດທະນາ ແລະ ບຳລຸງຮັກສາ ລະບົບກວດກາຄຸນນະພາບການບໍລິການໂທລະຄົມ ມະນາຄົມ ແລະ ອິນເຕີເນັດ ໃຫ້ມີຄວາມທັນສະໄໝ;
10. ສະຫຼຸບ ແລະ ຂຶ້ນແຜນເຄື່ອນໄຫວວຽກງານ ຂອງພະແນກ, ປະຈຳ ອາທິດ, ເດືອນ, ງວດ ແລະ ປີ;
11. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຫົວໜ້າອົງການ ແລະ ຄະນະອົງການຜູ້ຊີ້ນຳ.

**ມາດຕາ 12 ໜ້າທີ່ຂອງ ພະແນກ ເລກໝາຍໂທລະຄົມມະນາຄົມ**

ພະແນກເລກໝາຍໂທລະຄົມມະນາຄົມ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ, ປັບປຸງ ແລະ ເຜີຍແຜ່ ບັນດານິຕິກຳ ກ່ຽວກັບວຽກງານຄຸ້ມຄອງການນຳໃຊ້ເລກ ໝາຍໂທລະຄົມມະນາຄົມທຸກລະບົບໃນແຕ່ລະໄລຍະ;
2. ຄົ້ນຄວ້າ ສ້າງ ແລະ ປັບປຸງ ເຄື່ອງມືທີ່ທັນສະໄໝ ເພື່ອມານຳໃຊ້ໃນວຽກຈັດສັນເລກໝາຍໂທລະຄົມມະນາຄົມ, ການຄຸ້ມຄອງການໂອນຍ້າຍສິດນຳໃຊ້ເລກໝາຍໂທລະຄົມມະນາຄົມ, ການຂຶ້ນທະບຽນເລກໝາຍໂທລະຄົມມະນາຄົມ ໃຫ້ສະດວກວ່ອງໄວ ຕໍ່ການຄຸ້ມຄອງ;
3. ຄົ້ນຄວ້າ ສ້າງ ແລະ ປັບປຸງ ແຜນຈັດສັນເລກໝາຍໂທລະຄົມມະນາຄົມທຸກລະບົບ ຕາມມາດຕະຖານເຕັກ ນິກສາກົນ ໃຫ້ແທດເໝາະກັບສະພາບການປ່ຽນແປງຂອງເຕັກໂນໂລຊີ, ແຜນຍຸດທະສາດ ແລະ ການພັດທະນາເສດຖະກິດ-ສັງຄົມ ແຕ່ລະໄລຍະ;
4. ຄົ້ນຄວ້າ ຫຼັກການ, ວິທີການ ແລະ ຂັ້ນຕອນຈັດຕັ້ງປະຕິບັດ ເພື່ອນຳໃຊ້ເຂົ້າໃນການຈັດສັນກຸ່ມເລກໝາຍເລກໝາຍໂທລະສັບຮູບແບບສະເພາະ ຕາມຄວາມຮຽກຮ້ອງຕ້ອງການຂອງຜູ້ໃຊ້ເລກ ໝາຍໂທລະສັບ;
5. ຄຸ້ມຄອງ ແລະ ໝູນໃຊ້ ຖານຂໍ້ມູນການຂຶ້ນທະບຽນເລກໝາຍທີ່ຖືກຕ້ອງ ໃຫ້ເກີດຜົນປະໂຫຍດ ລວມໃຫ້ແກ່ການທັນທັນສະໄໝ;
6. ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານຂຶ້ນທະບຽນເລກໝາຍໂທລະຄົມມະນາຄົມ ເພື່ອຮັບປະ ກັນໄດ້ທາງດ້ານຂໍ້ມູນ;
7. ຕິດຕາມ, ກວດກາ ມູນຄ່າການນຳໃຊ້ ຂອງເລກໝາຍໂທລະຄົມມະນາຄົມ ທີ່ບໍ່ມີການເຄື່ອນໄຫວຂອງຜູ້ໃຊ້ບໍລິການ;
8. ເກັບກຳສະຖິຕິ ດ້ານການນຳໃຊ້ເລກໝາຍໂທລະຄົມມະນາຄົມ;
9. ສະຫຼຸບ ແລະ ຂຶ້ນແຜນເຄື່ອນໄຫວວຽກງານ ຂອງພະແນກ ປະຈຳ ອາທິດ, ເດືອນ, ງວດ ແລະ ປີ;
10. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຫົວໜ້າອົງການ ແລະ ຄະນະອົງການຜູ້ຊີ້ນຳ.

**ມາດຕາ 13 ໜ້າທີ່ຂອງ ພະແນກ ປົກປ້ອງຜູ້ໃຊ້ບໍລິການ ແລະ ແກ້ໄຂຂໍ້ຂັດແຍ່ງ**

ພະແນກປົກປ້ອງຜູ້ໃຊ້ບໍລິການ ແລະ ແກ້ໄຂຂໍ້ຂັດແຍ່ງ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ, ປັບປຸງ ແລະ ເຜີຍແຜ່ ບັນດານິຕິກຳ ກ່ຽວກັບ ວຽກງານປົກປ້ອງສິດ-ການແກ້ໄຂຂໍ້ຂັດແຍ່ງຂອງຜູ້ໃຊ້-ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃນແຕ່ລະໄລຍະ;
2. ສຳຫຼວດຄວາມເພິ່ງພໍໃຈຂອງ ຜູ້ໃຊ້ບໍລິການ ຕໍ່ກັບການບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃນແຕ່ລະໄລຍະຢ່າງເປັນປົກກະຕິ;
3. ສ້າງກົນໄກ, ຂັ້ນຕອນການດຳເນີນວຽກງານ ປົກປ້ອງສິດ ຂອງຜູ້ໃຊ້ ແລະ ຜູ້ໃຫ້ບໍລິການ ໃຫ້ແທດເໝາະກັບການພັດທະນາເຕັກໂນໂລຊີ ໃນແຕ່ລະໄລຍະ;
4. ຄົ້ນຄວ້າ, ສ້າງລະບົບ ເພື່ອເຜີຍແຜ່ຂໍ້ມູນ ຮູບແບບ ແລະ ວິທີການ ນຳໃຊ້ການບໍລິການເຕັກໂນໂລຊີເພື່ອສ້າງຄວາມຮູ້ ແລະ ຄວາມເຂົ້າໃຈ ພ້ອມທັງຮັບປະກັນໃຫ້ມີຄວາມປອດໄພ;
5. ຮັບ ແລະ ພິຈາລະນາແກ້ໄຂ ຄຳສະເໜີຂອງຜູ້ໃຊ້ບໍລິການ ແລະ ຜູ້ໃຫ້ບໍລິການ ກ່ຽວຂ້ອງກັບ ການບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ;
6. ສົ່ງເສີມ ການເຂົ້າເຖິງສິດ ແລະ ຜົນປະໂຫຍດຂອງຜູ້ໃຊ້ບໍລິການ;
7. ເກັບກຳສະຖິຕິ ຄຳສະເໜີ, ການແກ້ໄຂບັນຫາ ກ່ຽວກັບ ການບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ;
8. ໃຫ້ຄຳແນະນຳຕໍ່ຜູ້ໃຊ້ບໍລິການທີ່ຖືກລະເມີດສິດ ເພື່ອສາມາດດຳເນີນການຕາມກົດໝາຍ ແລະ ລະບຽບການໄດ້ຢ່າງຖືກຕ້ອງ;
9. ຕິດຕາມ ແລະ ກວດກາ ການນຳໃຊ້ບໍລິການໂທລະຄົມມະນາຄົມແລະອິນເຕີເນັດ ໃຫ້ຖືກຕ້ອງຕາມແຕ່ລະບໍລິການ;
10. ຕິດຕາມ ແລະ ກວດກາ ມູນຄ່າການນຳໃຊ້ຂອງເລກໝາຍໂທລະສັບໃນການນຳໃຊ້ບໍລິການ;
11. ເປັນໃຈກາງໃນການປະສານສົມທົບກັບອົງການຈັດຕັ້ງທີ່ກ່ຽວຂ້ອງ ແຕ່ສູນກາງຮອດທ້ອງຖິ່ນກ່ຽວກັບການແກ້ໄຂຂໍ້ຂັດແຍ່ງ ດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ;
12. ສະຫຼຸບ ແລະ ຂຶ້ນແຜນເຄື່ອນໄຫວວຽກງານ ຂອງພະແນກ, ປະຈຳ ອາທິດ, ເດືອນ, ງວດ ແລະ ປີ;
13. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຫົວໜ້າອົງການ ແລະ ຄະນະອົງການຜູ້ຊີ້ນຳ.

**ມາດຕາ 14 ໜ້າທີ່ຂອງ ພະແນກ ພັດທະນາໂຄງລ່າງພື້ນຖານ ໂທລະຄົມມະນາຄົມ ແລະ ອິນເຕີເນັດ**

ພະແນກ ພັດທະນາໂຄງລ່າງພື້ນຖານ ໂທລະຄົມມະນາຄົມ ແລະ ອິນເຕີເນັດ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ, ປັບປຸງ ແລະ ເຜີຍແຜ່ ບັນດານິຕິກຳຕ່າງໆ ທີ່ກ່ຽວຂ້ອງກັບການພັດທະນາໂຄງລ່າງພື້ນຖານໂທລະຄົມມະນາຄົມ ແລະ ອິນເຕີເນັດ;
2. ສ້າງກົນໄກຊຸກຍູ້ການຂະຫຍາຍໂຄງລ່າງພື້ນຖານໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃຫ້ໄປເຖິງເຂດຊົນນະບົດ ແລະ ເຂດຫ່າງໄກສອກຫລີກ;
3. ຊຸກຍູ້, ສ້າງກົນໄກ ແລະ ອຳນວຍຄວາມສະດວກໃຫ້ບັນດາບໍລິສັດຜູ້ໃຫ້ບໍລິການ ມີການນຳໃຊ້ໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກຮ່ວມກັນ ບົນພື້ນຖານຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດສູງ;
4. ສ້າງກົນໄກ ແລະ ແຜນການຈັດສັນ ການຕິດຕັ້ງ ໂຄງລ່າງພື້ນຖານ, ສາຍສົ່ງ, ສາຍອາກາດ ເພື່ອຄວາມເປັນລະບຽບຮຽບຮ້ອຍ ແລະ ຮັບປະກັນຄວາມປອດໄພຂອງສັງຄົມ;
5. ຄົ້ນຄ້ວາ, ກຳນົດ ແລະ ຢັ້ງຢືນ ການຕິດຕັ້ງໂຄງລ່າງພື້ນຖານ ຕາມເງື່ອນໄຂທີ່ກຳນົດໄວ້;
6. ສຳຫລວດເກັບກຳຂໍ້ມູນ ການຕິດຕັ້ງໂຄງລ່າງພື້ນຖານ, ສ້າງແຜນທີ່ເຄືອຂ່າຍ ໃນແຕ່ລະໄລຍະ ເພື່ອກຳນົດນະໂຍບາຍ ແລະ ຂໍ້ບັງຄັບ ໃຫ້ບັນດາບໍລິສັດໂທລະຄົມມະນາຄົມ ແລະ ອິນເຕີເນັດ ຂະຫຍາຍຕາໜ່າງການບໍລິການໃຫ້ທົ່ວເຖິງ;

7. ເກັບກຳສະຖິຕິ ການດຳເນີນທຸລະກິດຮອບດ້ານ ຂອງຫົວໜ່ວຍທຸລະກິດໂທລະຄົມມະນາຄົມ ແລະ ອິນເຕີເນັດ ຂອງ ສປປ ລາວ;
8. ພົວພັນປະສານກັບ ບັນດາພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ/ນະຄອນຫຼວງ ກ່ຽວກັບວຽກງານການຕິດຕັ້ງ ແລະ ນຳໃຊ້ໂຄງລ່າງພື້ນຖານໂທລະຄົມມະນາຄົມ;
9. ສ້າງແຜນການພັດທະນາເຄືອຂ່າຍການບໍລິການ, ວຽກງານດັດສົມໂທລະຄົມມະນາຄົມແລະອິນເຕີເນັດທີ່ຕິດພັນກັບການນຳໃຊ້ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ;
10. ສັງລວມແຜນການການພັດທະນາວຽກງານ ເຕັກໂນໂລຊີ ແລະ ການສື່ສານ ທີ່ນຳໃຊ້ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ ຂອງພາກສ່ວນຕ່າງໆ ເພື່ອນຳສະ ເໜີຕໍ່ ຄະນະຄຸ້ມຄອງກອງທຶນ;
11. ຕິດຕາມ, ກວດກາ, ສະຫລຸບ ແລະ ລາຍງານ ການການນຳໃຊ້ກອງທຶນພັດທະນາໂທລະຄົມມະ ນາຄົມ ແລະ ການຫັນເປັນດິຈິຕ໋ອນ ຂອງທຸກພາກສ່ວນ ເພື່ອລາຍງານຄະນະຄຸ້ມຄອງກອງທຶນເປັນປົກກະຕິ;
12. ສະຫຼຸບ ແລະ ຂຶ້ນແຜນເຄື່ອນໄຫວວຽກງານ ຂອງພະແນກ, ປະຈຳ ອາທິດ, ເດືອນ, ງວດ ແລະ ປີ;
13. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຫົວໜ້າອົງການ ແລະ ຄະນະອົງການຜູ້ຊີ້ນຳ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 15 ຫຼັກການ

ອົງການດັດສົມໂທລະຄົມມະນາຄົມ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕີກລົງເປັນໝູ່ຄະນະກ່ຽວກັບ ບັນຫາລວມຂອງອົງການດັດສົມໂທລະຄົມມະນາຄົມ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນທຸກລະດັບ;
3. ທຸກການເຄື່ອນໄຫວວຽກງານແມ່ນອີງໃສ່ກົດໝາຍ, ລະບຽບການ, ຫຼັກການລວມຂອງພັກ-ລັດ, ນຳເອົານະໂຍບາຍຂອງພັກ-ລັດຖະບານ ແລະ ນຳເອົາແຜນການປະຈຳປີ, ແຜນ 5 ປີຂອງ ກະຊວງ, ອົງການຈັດຕັ້ງທຽບເທົ່າກະຊວງ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

### ມາດຕາ 16 ແບບແຜນວິທີເຮັດວຽກ

ອົງການດັດສົມໂທລະຄົມມະນາຄົມ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນງານ, ແຜນການ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ; ປະສານສົມທົບຢ່າງແໜ້ນແຟ້ນກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດວຽກງານ ໃຫ້ໄດ້ຮັບຜົນດີ,
2. ເຮັດວຽກມີການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້ຜົນເສຍ;
3. ປະຕິບັດລະບອບປະຊຸມ ປະຈຳເດືອນ, 3 ເດືອນ, 6 ເດືອນ ຫຼື ປະຈຳປີ ແລະ ປະຕິບັດລະບອບລາຍງານໃຫ້ກະຊວງ ເປັນປົກກະຕິ;
4. ປະຕິບັດການພົວພັນປະສານງານພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບການ

## ໝວດທີ 6

## ບົດບັນຍັດສຸດທ້າຍ

**ມາດຕາ 17 ງົບປະມານ ແລະ ຕາປະທັບ**

ອົງການດັດສົມໂທລະຄົມມະນາຄົມ ມີງົບປະມານ ແລະ ຕາປະທັບ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 18 ການຈັດຕັ້ງປະຕິບັດ**

ບັນດາການຈັດຕັ້ງທີ່ຂຶ້ນກັບກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 19 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງສະບັບເລກທີ 1684/ປທສ, ລົງວັນທີ 05 ເມສາ 2017.

ລັດຖະມົນຕີ

ບົ່ວງຄຳ ວົງດາລາ